ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 0616/ກສ

ນະຄອນຫຼວງວຽງຈັນ, ວັນທີ 13 AUG 2025

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ຂອງຫ້ອງການ, ບັນດາກົມ ແລະ ທຽບເທົ່າ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ

- ອີງຕາມ ມະຕິ ຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ສະບັບເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025;
- ອີງຕາມ ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງ ຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ແຈ້ງການ ຂອງຄະນະຈັດຕັ້ງສູນກາງພັກ ກ່ຽວກັບການຮັບຮອງເອົາກົງຈັກການຈັດຕັ້ງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 221/ຄຈສພ, ລົງວັນທີ 13 ມິຖຸນາ 2025;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 12 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

ມາດຕາ 1 ຮັບຮອງເອົາໂຄງປະກອບກົງຈັກ ຂອງຫ້ອງການ, ບັນດາກົມ ແລະ ທຽບເທົ່າ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ດັ່ງມີລາຍລະອຽດລຸ່ມນີ້:

**I. ໂຄງປະກອບກົງຈັກ ຂອງຫ້ອງການ, ບັນດາກົມ ແລະ ທຽບເທົ່າ**

**1. ຫ້ອງການ ປະກອບມີ 8 ພະແນກ**

1) ພະແນກບໍລິຫານ
2) ພະແນກເລຂານຸການ-ພິທີການ
3) ພະແນກຄົ້ນຄວ້າ-ສັງລວມ
4) ພະແນກຄຸ້ມຄອງການລົງທຶນ
5) ພະແນກການເງິນ
6) ພະແນກຄຸ້ມຄອງຊັບສິນຂອງລັດ
7) ພະແນກນິຕິກຳ
8) ພະແນກເຕັກໂນໂລຊີ ຂໍ້ມູນ-ຂ່າວສານ

**2. ກົມຈັດຕັ້ງ ແລະ ພະນັກງານ ປະກອບມີ 7 ພະແນກ**

1) ພະແນກສັງລວມ
2) ພະແນກພັກ ແລະ ອົງການຈັດຕັ້ງມະຫາຊົນ

3) ພະແນກຄຸ້ມຄອງພະນັກງານ
4) ພະແນກພັດທະນາບຸກຄະລາກອນ
5) ພະແນກພັດທະນາການຈັດຕັ້ງ
6) ພະແນກນະໂຍບາຍ
7) ພະແນກຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ

**3. ກົມກວດກາ ປະກອບມີ 5 ພະແນກ**

1) ພະແນກສັງລວມ
2) ພະແນກກວດກາພັກ
3) ພະແນກກວດກາລັດ
4) ພະແນກຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ
5) ພະແນກຄົ້ນຄວ້າຄໍາຮ້ອງ-ຄໍາສະເໜີ

**4. ກົມແຜນການ ແລະ ການຮ່ວມມື ປະກອບມີ 8 ພະແນກ**

1) ພະແນກສັງລວມ
2) ພະແນກແຜນການ
3) ພະແນກນະໂຍບາຍ ແລະ ປະເມີນຜົນ
4) ພະແນກຮ່ວມມືສອງຝ່າຍ
5) ພະແນກຮ່ວມມືອາຊຽນ ແລະ ພາກພື້ນ
6) ພະແນກຮ່ວມມືອົງການຈັດຕັ້ງສາກົນ
7) ພະແນກຄຸ້ມຄອງໂຄງການ
8) ພະແນກສະຖິຕິກະສິກໍາ ແລະ ສິ່ງແວດລ້ອມ

**5. ກົມສົ່ງເສີມກະສິກໍາ ແລະ ສະຫະກອນ ປະກອບມີ 9 ພະແນກ ແລະ ທຽບເທົ່າ**

1) ພະແນກສັງລວມ
2) ພະແນກສົ່ງເສີມ ກຸ່ມ ແລະ ສະຫະກອນ
3) ພະແນກຕິດຕາມ, ປະເມີນ ສະຫະກອນ ແລະ ກອງທຶນ
4) ພະແນກສົ່ງເສີມກະສິກໍາແບບມີສັນຍາ ແລະ ເຊື່ອມໂຍງຕະຫຼາດ
5) ພະແນກສົ່ງເສີມເຕັກນິກການຜະລິດ ແລະ ກົນຈັກກະສິກໍາ
6) ພະແນກສົ່ງເສີມການຜະລິດ ແລະ ນໍາໃຊ້ແນວພັນ
7) ພະແນກສົ່ງເສີມການປຸງແຕ່ງ ແລະ ໂພຊະນາການ
8) ສູນພັດທະນາກະສິກໍາ
9) ສູນສາທິດເຕັກນິກກະສິກໍາ

- ສໍາລັບ ສູນພັດທະນາກະສິກໍາ 30 ເຮັກຕາ (ແຂວງໄຊຍະບູລີ), ສູນພັດທະນາກະສິກໍາ ນໍ້າປາຈາດ (ແຂວງໄຊສົມບູນ) ແລະ ສູນພັດທະນາກະສິກໍາ ຫຼັກ 35 (ແຂວງສະຫວັນນະເຂດ) ແມ່ນໃຫ້ໂອນໄປຂຶ້ນກັບຂະແໜງສົ່ງເສີມກະສິກໍາ ແລະ ສະຫະກອນ ຂອງບັນດາແຂວງດັ່ງກ່າວ.

6. ກົມປູກຝັງ ປະກອບມີ 9 ພະແນກ ແລະ ທຽບເທົ່າ
   1) ພະແນກສັງລວມ
   2) ພະແນກແຜນການ ແລະ ການຮ່ວມມື
   3) ພະແນກລົງທຶນດ້ານການປູກຝັງ
   4) ພະແນກລະບຽບການ ແລະ ຂື້ນທະບຽນປັດໄຈການຜະລິດ
   5) ພະແນກກັກກັນພືດ
   6) ພະແນກມາດຕະຖານ ແລະ ການຍັ້ງຢືນ
   7) ພະແນກຄຸ້ມຄອງການປຸງແຕ່ງພືດ
   8) ສູນປ້ອງກັນພືດ
   9) ສູນມາດຕະຖານກະສິກຳສະອາດ

7. ກົມລ້ຽງສັດ ແລະ ການປະມົງ ປະກອບມີ 10 ພະແນກ ແລະ ທຽບເທົ່າ
   1) ພະແນກສັງລວມ
   2) ພະແນກແຜນການ ແລະ ການຮ່ວມມື
   3) ພະແນກມາດຕະຖານ ແລະ ສຸຂານາໄມ
   4) ພະແນກລ້ຽງສັດ
   5) ພະແນກສັດຕະວະແພດ
   6) ພະແນກປະມົງ
   7) ສູນວິໄຈພະຍາດສັດ
   8) ສູນຜະລິດຢາສັດຕະວະແພດ
   9) ສູນວິໄຈອາຫານສັດ
   10) ສູນພັດທະນາການປະມົງ

8. ກົມຊົນລະປະທານ ປະກອບມີ 7 ພະແນກ ແລະ ທຽບເທົ່າ
   1) ພະແນກສັງລວມ
   2) ພະແນກແຜນການ ແລະ ການຮ່ວມມື
   3) ພະແນກພັດທະນາຊົນລະປະທານ ແລະ ການລະບາຍ
   4) ພະແນກຄຸ້ມຄອງເຕັກນິກຊົນລະປະທານ
   5) ພະແນກຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານ
   6) ສູນສຳຫຼວດ-ອອກແບບຊົນລະປະທານ
   7) ສູນພັດທະນາຊົນລະປະທານ ຮ່ວມມື ລາວ-ສ.ເກົາຫຼີ

9. ກົມປ່າໄມ້ ປະກອບມີ 11 ພະແນກ ແລະ ທຽບເທົ່າ
   1) ພະແນກສັງລວມ
   2) ພະແນກແຜນການ ແລະ ການຮ່ວມມື
   3) ພະແນກຄຸ້ມຄອງປ່າປ້ອງກັນ
   4) ພະແນກຄຸ້ມຄອງປ່າສະຫງວນ
   5) ພະແນກຄຸ້ມຄອງປ່າຜະລິດ
   6) ພະແນກຄຸ້ມຄອງສັດປ່າ ແລະ ສົນທິສັນຍາສາກົນ (CITES)
   7) ພະແນກຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ
   8) ພະແນກຄຸ້ມຄອງປ່າໄມ້ບ້ານ ψ

9) ພະແນກຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້
10) ກອງສຳຫຼວດປ່າໄມ້ ແລະ ປ້ອງກັນໄຟປ່າ
11) ສູນຝຶກອົບຮົມປ່າໄມ້ ແລະ ຍັ້ງຢືນປ່າໄມ້ແຫ່ງຊາດ

ນອກນັ້ນ, ຍັງມີກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ຫຼື ກອງຄຸ້ມຄອງອຸທິຍານແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແລະ ປ່າສະຫງວນແຫ່ງຊາດ ທີ່ເປັນມໍລະດົກພາກພື້ນ ແລະ ມໍລະດົກໂລກ ດ້ານການຈັດຕັ້ງ ແມ່ນຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໂດຍແມ່ນກົມປ່າໄມ້ ເປັນເສນາທິການ ແລະ ເປັນຜູ້ຊີ້ນຳໂດຍກົງ ແລະ ມີຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ, ຫົວໜ້າກອງ ມີຕຳແໜ່ງບໍລິຫານປະເພດ 4.

10. ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ປະກອບມີ 9 ພະແນກ ແລະ ທຽບເທົ່າ
1) ພະແນກສັງລວມ
2) ພະແນກຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນ
3) ພະແນກຄຸ້ມຄອງທະບຽນທີ່ດິນ ແລະ ປະເມີນລາຄາທີ່ດິນ
4) ພະແນກຄຸ້ມຄອງທີ່ດິນລັດ
5) ພະແນກຄຸ້ມຄອງທຸລະກິດທີ່ດິນ
6) ສູນຂໍ້ມູນຂ່າວສານທີ່ດິນ
7) ສູນສຳຫຼວດ-ວັດແທກ ແລະ ແຜນທີ່
8) ສູນພັດທະນາຄຸນນະພາບດິນ ແລະ ຝຸ່ນ
9) ສູນວິໄຈດິນ

11. ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ປະກອບມີ 6 ພະແນກ ແລະ ທຽບເທົ່າ
1) ພະແນກສັງລວມ
2) ພະແນກແຜນການ ແລະ ການຮ່ວມມື
3) ພະແນກພັດທະນາຊົນນະບົດ
4) ພະແນກແກ້ໄຂຄວາມທຸກຍາກ
5) ພະແນກຈັດສັນພູມລຳເນົາ ແລະ ອາຊີບ
6) ພະແນກມາດຕະຖານ ແລະ ປະເມີນຜົນ

ນອກນັ້ນ, ຍັງມີກອງທຶນຫຼຸດຜ່ອນຄວາມທຸກຍາກ ຊຶ່ງເປັນຫົວໜ່ວຍວິຊາການລະດັບສອງທີ່ຂຶ້ນກັບກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ເຄື່ອນໄຫວຕາມດຳລັດ ວ່າດ້ວຍກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ, ຜູ້ອຳນວຍການກອງທຶນ ມີຕຳແໜ່ງບໍລິຫານປະເພດ 3.

12. ກົມຊັບພະຍາກອນນ້ຳ ປະກອບມີ 6 ພະແນກ
1) ພະແນກສັງລວມ
2) ພະແນກວາງແຜນ ແລະ ພັດທະນາອ່າງຮັບນ້ຳ
3) ພະແນກຄຸ້ມຄອງການນຳໃຊ້ນ້ຳ
4) ພະແນກຄຸ້ມຄອງນ້ຳໃຕ້ດິນ
5) ພະແນກປະເມີນຊັບພະຍາກອນນ້ຳ
6) ພະແນກຄຸ້ມຄອງບໍລິຫານຈັດການນ້ຳ ບັນດາອ່າງເກັບນ້ຳ ເພື່ອຕ້ານຖ້ວມ-ຕ້ານແລ້ງ

13. ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະກອບມີ 8 ພະແນກ
    1) ພະແນກສັງລວມ
    2) ພະແນກສືບສວນ-ສອບສວນ
    3) ພະແນກກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ
    4) ພະແນກກວດກາສັດນໍ້າ ແລະ ສັດປ່າ
    5) ພະແນກກວດກາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນໍ້າ
    6) ພະແນກກວດກາສິ່ງແວດລ້ອມ ຂະແໜງບໍ່ແຮ່
    7) ພະແນກກວດກາສິ່ງແວດລ້ອມ ຂະແໜງພະລັງງານ
    8) ພະແນກກວດກາສິ່ງແວດລ້ອມທົ່ວໄປ

14. ກົມອຸຕຸນິຍົມ ແລະ ອຸທົກກະສາດ ປະກອບມີ 6 ພະແນກ
    1) ພະແນກສັງລວມ
    2) ພະແນກພູມອາກາດ, ອຸຕຸກະເສດ ແລະ ສືບຢັ່ງທາງໄກ
    3) ພະແນກອຸທົກກະສາດ
    4) ພະແນກຕາໜ່າງອຸຕຸນິຍົມ ແລະ ແຜ່ນດິນໄຫວ
    5) ພະແນກພະຍາກອນອາກາດ ແລະ ແຈ້ງເຕືອນໄພ
    6) ພະແນກອຸຕຸການບິນ

15. ກົມສິ່ງແວດລ້ອມ ປະກອບມີ 8 ພະແນກ
    1) ພະແນກສັງລວມ
    2) ພະແນກສົ່ງເສີມສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ
    3) ພະແນກຄຸ້ມຄອງສິ່ງແວດລ້ອມພະລັງງານ
    4) ພະແນກຄຸ້ມຄອງສິ່ງແວດລ້ອມບໍ່ແຮ່
    5) ພະແນກຄຸ້ມຄອງສິ່ງແວດລ້ອມທົ່ວໄປ
    6) ພະແນກປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ
    7) ພະແນກຫຼຸດຜ່ອນທາດອາຍເຮືອນແກ້ວ
    8) ພະແນກຄຸ້ມຄອງສິນເຊື່ອກາກບອນ

16. ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະກອບມີ 16 ພະແນກ ແລະ ທຽບເທົ່າ
    1) ພະແນກສັງລວມ
    2) ຫ້ອງການສະພາວິທະຍາສາດກະສິກຳ ແລະ ສິ່ງແວດລ້ອມ
    3) ທະນາຄານເຊື້ອພັນກະສິກຳ ແລະ ປ່າໄມ້
    4) ສູນຄົ້ນຄວ້ານະໂຍບາຍ-ເສດຖະກິດກະສິກຳ ແລະ ພັດທະນາຊົນນະບົດ
    5) ສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ
    6) ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ
    7) ສູນຄົ້ນຄວ້າການລ້ຽງສັດ
    8) ສູນຄົ້ນຄວ້າການປະມົງ
    9) ສູນຄົ້ນຄວ້າປ່າໄມ້
    10) ສູນຂໍ້ມູນຂ່າວສານກະສິກຳ ແລະ ປ່າໄມ້
    11) ສູນຄົ້ນຄວ້າວິໄຈຢາງພາລາ ຮ່ວມມືລາວ-ຈີນ (ຢຸນນານ)
    12) ສູນທົດລອງແນວພັນພືດທີ່ດີ ຮ່ວມມືລາວ-ຈີນ (ກວາງຊີ)

13) ສູນຄົ້ນຄວ້າກະສິກຳ ຫຼວງນ້ຳທາ

14) ສູນຄົ້ນຄວ້າກະສິກຳ ຫຼວງພະບາງ

15) ສູນຄົ້ນຄວ້າກະສິກຳ ທ່າຊະໂນ (ສະຫວັນນະເຂດ)

16) ສູນຄົ້ນຄວ້າກະສິກຳ ຈຳປາສັກ

17. ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ ປະກອບມີ 8 ພະແນກ ແລະ ທຽບເທົ່າ

1) ພະແນກສັງລວມ

2) ສູນເຕັກໂນໂລຊີ ຊີວະພາບ

3) ສູນນິເວດວິທະຍາ

4) ສູນວິໄຈຄຸນນະພາບສິ່ງແວດລ້ອມ

5) ສູນເຕັກໂນໂລຊີເຄມີ ແລະ ຜະລິດຕະພັນ

6) ສູນຄົ້ນຄວ້າແບບຈຳລອງ

7) ສູນບໍລິການນະວັດຕະກຳກະສິກຳ

8) ສູນຄົ້ນຄວ້າສິ່ງແວດລ້ອມ ແລະ ໝອກຄວັນ

18. ກອງເລຂາຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ປະກອບມີ 4 ພະແນກ

1) ພະແນກວາງແຜນອ່າງແມ່ນ້ຳຂອງ

2) ພະແນກຮ່ວມມືແມ່ນ້ຳຂອງຕອນເທິງ

3) ພະແນກຮ່ວມມືແມ່ນ້ຳຂອງຕອນລຸ່ມ

4) ພະແນກຂໍ້ມູນ-ຂ່າວສານ

II. ໂຄງປະກອບກົງຈັກ ຂອງຫົວໜ່ວຍວິຊາການລະດັບສອງ

1. ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ ປະກອບມີ 7 ຂະແໜງ

1) ຂະແໜງແຜນການ

2) ຂະແໜງພັດທະນາທີ່ດິນກະສິກຳ

3) ຂະແໜງຊົນລະປະທານ

4) ຂະແໜງປູກຝັງ

5) ຂະແໜງລ້ຽງສັດ ແລະ ສັດຕະວະແພດ

6) ຂະແໜງປະມົງ

7) ຂະແໜງສົ່ງເສີມ-ປຸງແຕ່ງ, ຝຶກອົບຮົມ ແລະ ສາທິດ

2. ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ປະກອບມີ 4 ຂະແໜງ

1) ຂະແໜງແຜນການ

2) ຂະແໜງປູກຝັງ

3) ຂະແໜງລ້ຽງສັດ

4) ຂະແໜງວິໄຈພືດ

3. ສູນບໍລິການເຕັກນິກກະສິກຳ ແລະ ພັດທະນາຊົນນະບົດ ລາວ-ເກົາຫຼີ ປະກອບມີ 5 ຂະແໜງ

1) ຂະແໜງແຜນການ

2) ຂະແໜງຝຶກອົບຮົມ

3) ຂະແໜງປູກຝັງ

4) ຂະແໜງລ້ຽງສັດ ແລະ ການປະມົງ

5) ຂະແໜງຝຶກອົບຮົມກະສິກຳພາກໃຕ້ ຫຼັກ 35 4

4. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີ 3 ຂະແໜງ
   1) ຂະແໜງແຜນການ
   2) ຂະແໜງຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ
   3) ຂະແໜງກວດກາປະເມີນຜົນ

5. ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ ປະກອບມີ 7 ພະແນກ ແລະ ທຽບເທົ່າ
   1) ພະແນກບໍລິຫານ ແລະ ແຜນການ
   2) ພະແນກພັດທະນາວິຊາການ
   3) ພາກວິຊາປູກຝັງ
   4) ພາກວິຊາລ້ຽງສັດ
   5) ພາກວິຊາການປະມົງ
   6) ພາກວິຊາທຸລະກິດກະສິກຳ
   7) ພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ

   ➢ ໂຮມຫ້ອງການກິດຈະການນັກສຶກສາ ເຂົ້າກັບຫ້ອງການພັດທະນາວິຊາການ ເອີ້ນຊື່ໃໝ່ວ່າ: ພະແນກພັດທະນາວິຊາການ.

6. ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ປະກອບມີ 7 ພະແນກ ແລະ ທຽບເທົ່າ
   1) ພະແນກບໍລິຫານ ແລະ ແຜນການ
   2) ພະແນກພັດທະນາວິຊາການ
   3) ພາກວິຊາປູກຝັງ
   4) ພາກວິຊາລ້ຽງສັດ ແລະ ການປະມົງ
   5) ພາກວິຊາປ່າໄມ້
   6) ພາກວິຊາທຸລະກິດກະສິກຳ
   7) ພາກວິຊາສັດຕະວະແພດ

7. ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ປະກອບມີ 7 ພະແນກ ແລະ ທຽບເທົ່າ
   1) ພະແນກບໍລິຫານ ແລະ ແຜນການ
   2) ພະແນກພັດທະນາວິຊາການ
   3) ພາກວິຊາປູກຝັງ
   4) ພາກວິຊາລ້ຽງສັດ ແລະ ການປະມົງ
   5) ພາກວິຊາປ່າໄມ້
   6) ພາກວິຊາທຸລະກິດກະສິກຳ
   7) ພາກວິຊາປ້ອງກັນພືດ

8. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ປະກອບມີ 9 ພະແນກ ແລະ ທຽບເທົ່າ
   1) ພະແນກບໍລິຫານ ແລະ ແຜນການ
   2) ພະແນກພັດທະນາວິຊາການ
   3) ພາກວິຊາປູກຝັງ
   4) ພາກວິຊາລ້ຽງສັດ
   5) ພາກວິຊາປະມົງ
   6) ພາກວິຊາປ່າໄມ້
   7) ພາກວິຊາທຸລະກິດກະສິກຳ
   8) ພາກວິຊາວິທະຍາສາດດິນ
   9) ສູນຄົ້ນຄວ້າເຂົ້າ ແລະ ຜະລິດກະສິກຳ

   ➢ ໂຮມຫ້ອງການກິດຈະການນັກສຶກສາ ເຂົ້າກັບຫ້ອງການພັດທະນາວິຊາການ ເອີ້ນຊື່ໃໝ່ວ່າ: ພະແນກພັດທະນາວິຊາການ.

9. ວິທະຍາໄລຊົນລະປະທານ ທ່າງ່ອນ ປະກອບມີ 5 ພະແນກ ແລະ ທຽບເທົ່າ
   1) ພະແນກບໍລິຫານ ແລະ ແຜນການ
   2) ພະແນກພັດທະນາວິຊາການ
   3) ພາກວິຊາວິສະວະກຳຊົນລະປະທານ
   4) ພາກວິຊາວິສະວະກຳຊັບພະຍາກອນນ້ຳ
   5) ພາກວິຊາກົນຈັກກະສິກຳ

**ມາດຕາ 2** ມອບໃຫ້ ຫ້ອງການ, ບັນດາກົມ ແລະ ທຽບເທົ່າ ແລະ ຫົວໜ່ວຍວິຊາການລະດັບສອງ ຕາມມາດຕາ 1 ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຖືເອົາໂຄງປະກອບກົງຈັກ ຕາມຂໍ້ຕົກລົງສະບັບນີ້ ເປັນບ່ອນອີງໃນການກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ຂອງຕົນ ນຳສະເໜີຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ (ກົມຈັດຕັ້ງ ແລະ ພະນັກງານ) ຄົ້ນຄວ້າສັງລວມ ເພື່ອນຳສະເໜີຄະນະພັກ, ຄະນະນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ລີ່ນຄຳ ດວງສະຫວັນ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ | 05 ສະບັບ |
| 2. ຫ້ອງການ | 01 ສະບັບ |
| 3. ກົມຈັດຕັ້ງ ແລະ ພະນັກງານ | 01 ສະບັບ |
| 4. ຫ້ອງການ, ບັນດາກົມ ແລະ ທຽບເທົ່າ, ຫົວໜ່ວຍວິຊາການລະດັບສອງ | 27 ສະບັບ |
| 5. ເກັບຮັກສາໄວ້ | 02 ສະບັບ |